ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ
ກອງເລຂາ

ເລກທີ 153 /ກລຂ

ນະຄອນຫຼວງວຽງຈັນ, ວັນທີ 17 JUL 2026

# ໜັງສືເຊີນປະມູນ

1. ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ, ກະຊວງສຶກສາທິການ ແລະ ກິລາ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນວຸດທິທີ່ເໝາະສົມ ເຂົ້າຍື່ນຊອງປະມູນສຳລັບສະໜອງເຄື່ອງໄອທີໃຫ້ແກ່ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ໄລຍະການຈັດສົ່ງແມ່ນ 45 ວັນ ພາຍຫຼັງເຊັນສັນຍາ;
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເໝາະສົມ;
4. ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ, ເບີໂທ (856-21)243311, (+856 20) 58448488 ແລະ ກວດກາເບິ່ງເອກະສານປະມູນໄດ້ໃນໂມງລັດຖະການ 08:00-16:00 ໂມງ;
5. ເອກະສານປະມູນຄົບຊຸດທີ່ເປັນພາສາລາວສາມາດໄປຊື້ໄດ້ໂດຍຜູ້ປະມູນທີ່ສົນໃຈ ໂດຍການຍື່ນໜັງສືສະເໜີຫາທີ່ຢູ່ຂ້າງລຸ່ມນີ້, ເລີ່ມແຕ່ວັນທີ 17 ກໍລະກົດ 2026 ເປັນຕົ້ນໄປ, ໃນລາຄາ 1.000.000 ກີບ ໜຶ່ງລ້ານກີບຖ້ວນ)/ຊອງ, ຈຳນວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ;
6. ຊອງປະມູນຕ້ອງສົ່ງທີ່ຢູ່ລຸ່ມນີ້, ໃນເວລາ ຫຼື ກ່ອນເວລາ 09:00 ໂມງ ຂອງວັນທີ21 ສິງຫາ2026 ຊອງປະມູນທີ່ສົ່ງມາທາງເອເລັກໂຕຣນິກຈະບໍ່ອະນຸຍາດ, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆ ຊອງຈະໄດ້ເປີດໃນເວລາ 09:00 ໂມງ ຂອງວັນທີ 21 ສິງຫາ 2026 ທີ່ຫ້ອງປະຊຸມຂອງກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳ;
7. ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນຈາກທະນາຄານໂດຍມີມູນຄ່າການຄ້ຳປະກັນບໍ່ໃຫ້ຫລຸດ 2% ເປີເຊັນ ຂອງມູນຄ່າທີ່ສະເໜີມາ;
8. ທີ່ຢູ່ຂອງກອງທຶນແມ່ນ: ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ, ຊັ້ນ 1, ຕຶກ 100 (ໃນຮົ້ວສຳນັກງານນາຍົກລັດຖະມົນຕີ),ບ້ານສີສະຫວາດ, ເມືອງ ຈັນທະບູລີ, ນະຄອນຫລວງວຽງຈັນ, ໂທລະສັບ: (856-21) 243311, (+856 20) 58448488; Email: sathaphonestv@gmail.com

ຫົວໜ້າກອງເລຂາ

ກອງເລຂາ

ແກ້ວອຸທອນ ຈຸນແສງຈັນ

CamScanner